ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 752 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2019

# ຂໍ້ຕົກລົງ

## ວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕໍ່າສຸດຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມໜັງສືສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ.

ເພື່ອຈັດຕັ້ງຜັນຂະຫຍາຍມາດຕາ 12 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ສ້າງຄວາມເຂັ້ມແຂງທາງດ້ານການເງິນ ໃຫ້ແກ່ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1** ໃຫ້ທະນາຄານທຸລະກິດ ເພີ່ມທຶນຈົດທະບຽນຕໍ່າສຸດ ໃຫ້ຄົບຈໍານວນ 500 ຕື້ກີບ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ເພີ່ມເງິນລົງທຶນຕໍ່າສຸດ ໃຫ້ຄົບ 300 ຕື້ກີບ ຕາມທີ່ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018.

**ມາດຕາ 2** ການເພີ່ມທຶນຈົດທະບຽນຂອງທະນາຄານທຸລະກິດ ແລະ ເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ປະຕິບັດດັ່ງນີ້:

1. ການເພີ່ມທຶນຈົດທະບຽນຂອງທະນາຄານທຸລະກິດຕ່າງປະເທດ (Subsidiary Bank), ເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໂອນມາຈາກຕ່າງປະເທດ ເຂົ້າບັນຊີທຶນຈົດທະບຽນຂອງທະນາຄານທຸລະກິດ ຫຼື ບັນຊີເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງປະເທດ ທີ່ເປີດໄວ້ຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ. ໃນກໍລະນີທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ຫາກມີກໍາໄລສຸດທິລໍຖ້າແບ່ງປັນ ຫຼື ກໍາໄລສະສົມ ຫາກມີຈຸດປະສົງນໍາໃຊ້ກໍາໄລດັ່ງກ່າວ ເພື່ອເພີ່ມທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ກໍສາມາດນໍາໃຊ້ໄດ້ ໂດຍໄດ້ຮັບຄໍາເຫັນດີຈາກຜູ້ທີ່ມີສິດອໍານາດຂອງທະນາຄານແມ່ ຫຼື ສໍານັກງານໃຫຍ່.
2. ການເພີ່ມທຶນຈົດທະບຽນຂອງທະນາຄານທຸລະກິດພາຍໃນ, ຂາຮຸ້ນຕ້ອງເພີ່ມທຶນຈົດທະບຽນຕາມອັດຕາສ່ວນການຖືຮຸ້ນຂອງຕົນ ໂດຍແຫຼ່ງທຶນຂອງຂາຮຸ້ນເອງ ຫຼື ກໍາໄລລໍຖ້າແບ່ງປັນຂອງທະນາຄານ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

3. ທະນາຄານທຸລະກິດ ຕ້ອງເພີ່ມທຶນຈົດທະບຽນຂອງຕົນ ໃຫ້ຄົບ 500 ຕື້ກີບ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງເພີ່ມເງິນລົງທຶນຕໍ່າສຸດໃຫ້ຄົບ 300 ຕື້ກີບ ພາຍໃນກຳນົດເວລາ 5 ປີ ນັບແຕ່ເດືອນກັນຍາ ປີ 2019 ເປັນຕົ້ນໄປ, ແຕ່ລະປີ ຕ້ອງເພີ່ມທຶນບໍ່ໃຫ້ຫຼຸດ 20% ຂອງທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ທີ່ຕ້ອງເພີ່ມ.

**ມາດຕາ 3** ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງສ້າງແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕໍ່າສຸດ ໂດຍໄດ້ຮັບການຮັບຮອງຈາກຜູ້ທີ່ມີສິດອຳນາດຂອງທະນາຄານທຸລະກິດ ແລະ ສຳນັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ. ໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສົ່ງແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕໍ່າສຸດ ມາຍັງກົມຄຸ້ມຄອງທະນາຄານທຸລະກິດ ບໍ່ໃຫ້ກາຍວັນທີ 30 ຕຸລາ 2019.

**ມາດຕາ 4** ເງິນເພີ່ມທຶນຈົດທະບຽນຂອງທະນາຄານທຸລະກິດ ແລະ ເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໂອນເຂົ້າບັນຊີທຶນຂອງຕົນທີ່ເປີດໄວ້ຢູ່ທະນາຄານແຫ່ງ ສປປ ລາວ, ໃນກໍລະນີການເພີ່ມທຶນເປັນເງິນຕາຕ່າງປະເທດ ຕ້ອງແລກປ່ຽນເປັນສະກຸນເງິນກີບ ຕາມອັດຕາແລກປ່ຽນປະຈຳວັນຂອງຕະຫຼາດຊື້-ຂາຍເງິນຕາຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ໃນມື້ເງິນເຂົ້າບັນຊີທຶນ.

**ມາດຕາ 5** ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການປະສານສົມທົບກັນ ໃນການດຳເນີນການຄຸ້ມຄອງ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນການເພີ່ມທຶນຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້.

**ມາດຕາ 6** ກົມຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ສອນໄຊ ສິດພະໄຊ